**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ເຈົ້າແຂວງ

ເລກທີ 1067/ຈຂ.ບກ

ບໍ່ແກ້ວ, ວັນທີ 15.12.2021

# ຂໍ້ຕົກລົງ

## ວ່າດ້ວຍ ຮັບຮອງແຜນຈັດສັນເຂດແຫຼ່ງທ່ອງທ່ຽວອະນຸລັກທຳມະຊາດປ່າໄມ້ ເນື້ອທີ່ 7.000 ເຮັກຕາ ຢູ່ເຂດປ້ອງກັນແຫ່ງຊາດ ສາຍພູກໍ່ວລົມ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ.

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ເລກທີ 64/ສພຊ ລົງວັນທີ 13ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັກຖະມົນຕີ ເລກທີ 090/ນຍ, ລົງວັນທີ 04 ກຸມພາ 2010;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010;
- ອີງຕາມ ຂໍ້ຕົກລົງຂອງກະຊວງກະສິກຳ ແລະ ປ່າໄມ້ເລກທີ 3930/ກປ, ລົງວັນທີ 4 ກັນຍາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ ບໍ່ແກ້ວ;
- ອີງຕາມ ບົດບັນທຶກກອງປະຊຸມ ຮັບຮອງແຜນຈັດສັນເຂດແຫຼ່ງທ່ອງທ່ຽວອະນຸລັກທຳມະຊາດປ່າໄມ້ ຄັ້ງວັນທີ 6 ທັນວາ 2021 ທີ່ຫ້ອງປະຊຸມວ່າການເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ.

ເພື່ອປະຕິບັດຕາມນະໂຍບາຍຂອງລັດ-ພັກ ໃນການຊຸກຍູ້ ແລະ ສົ່ງເສີມການລົງທຶນ ທີ່ນຳໃຊ້ປ່າໄມ້ ເປັນເຂດແຫຼ່ງທ່ອງທ່ຽວອະນຸລັກທຳມະຊາດປ່າໄມ້ ທີ່ແນ່ໃສ່ການຄຸ້ມຄອງ, ກວດກາຕິດຕາມ, ການປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນປ່າໄມ້ ທີ່ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຮັບປະກັນການເພີ່ມເນື້ອທີ່ຄວາມປົກຫຸ້ມປ່າໄມ້ ໃຫ້ບັນລຸເຖິງ 70% ໃນປີ 2030 ຕາມຄາດໝາຍສູ້ຊົນ ທີ່ໄດ້ກຳນົດໃນແຜນຍຸດທະສາດປ່າໄມ້ ຂອງລັດຖະບານ ລາວ.

**ເຈົ້າແຂວງ ຕົກລົງ:**

**ມາດຕາ 1** ເຫັນດີ ຮັບຮອງແຜນຈັດສັນເຂດແຫຼ່ງທ່ອງທ່ຽວອະນຸລັກທຳມະຊາດປ່າໄມ້ ເນື້ອທີ່ 7.000 ເຮັກຕາ ຢູ່ເຂດປ່າປ້ອງກັນແຫ່ງຊາດ ສາຍພູກໍ່ວລົມ, ເຂດເສດຖະກິດພິເສດສາມຫຼ່ຽມຄຳ, ເມືອງ ຕົ້ນເຜີ້ງ ແຂວງ ບໍ່ແກ້ວ ເພື່ອໃຫ້ເປັນບ່ອນອີງໃນການພັດທະນາສ້າງເປັນແຫຼ່ງທ່ອງທ່ຽວທຳມະຊາດປ່າໄມ້ ໂດຍມີການຄຸ້ມຄອງ, ກວດກາຕິດຕາມ, ປົກປັກຮັກສາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ໃຫ້ມີຄວາມຍືນຍົງ ໂດຍການມີສ່ວນຮ່ວມຂອງປະຊາຊົນ.

**ມາດຕາ 2** ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງອອກໃບຢັ້ງຢືນການນຳໃຊ້ຂອບເຂດເນື້ອທີ່ 7.000 ເຮັກຕາ ເພື່ອເປັນບ່ອນອີງໃນການດຳເນີນທຸລະກິດຂອງຜູ້ປະກອບການ ແລະ ເປັນເຈົ້າໃນການປະສານສົມ



Scanned with CamScanner

ທົບກັບພາກສ່ວນທີ່ກ່ຽວຂ້ອງ ຢູ່ຂັ້ນແຂວງ, ເມືອງແລະ ອຳນາດການປົກຄອງບ້ານຈັດຕັ້ງຜັນຂະຫຍາຍແຜນຈັດສັນສະບັບນີ້ໃຫ້ໄດ້ຮັບຜົນດີ ພ້ອມທັງກຳນົດສິດ, ໜ້າທີ່, ພາລະບົດບາດຂອງແຕ່ລະພາກສ່ວນໃຫ້ລະອຽດ.

**ມາດຕາ 3** ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດ ສາມຫຼ່ຽມຄຳ ສ້າງເປັນບົດວິພາກເສດຖະກິດ ກ່ຽວກັບການແຫຼ່ງທ່ອງທ່ຽວທຳມະຊາດປ່າໄມ້ ທີ່ເປັນມິດກັບສິ່ງແວດລ້ອມ ໂດຍການເຫັນດີ ເປັນເອກະພາບກັບພາກສ່ວນກ່ຽວຂ້ອງຂອງພາກລັດ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ ແຂວງບໍ່ແກ້ວ**

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ເຄື່ອນເພັດ ວົງຈັນ
Kheuanphet VONGCHAN

ບ່ອນສົ່ງ:

- ພາກສ່ວນທີ່ກ່ຽວຂ້ອງ 1 ສະບັບ
- ສຳເນົາ 1ສະບັບ



Scanned with CamScanner